**ບົດຖະແຫຼງຂ່າວ**
**ຂອງ**
**ທ່ານ ນາງ ຈັນສຸກ ແສງພະຈັນ ຮອງລັດຖະມົນຕີກະຊວງ**
**ອຸດສາຫະກຳ ແລະ ການຄ້າ**

**<u>ສະພາບການຄຸ້ມຄອງລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ແລະ ບາງວິທີການແກ້ໄຂ</u>**

ຮຽນບັນດາການນຳ ພັກ, ລັດ;

ສະແດງຄວາມນັບຖື ແລະ ຮັກແພງ ມາຍັງ ພໍ່ແມ່ປະຊາຊົນບັນດາເຜົ່າ, ບັນດາທ່ານທີ່ຕິດຕາມຂ່າວສານ ແລະ ສື່ມວນຊົນທັງຫຼາຍ;

ດັ່ງທີ່ບັນດາທ່ານ, ພໍ່ແມ່ປະຊາຊົນທັງຫຼາຍ ໄດ້ຮັບຮູ້ແລ້ວວ່າ ປະຈຸບັນ ສະພາບເສດຖະກິດພາກພື້ນ ແລະ ໂລກ ເຂົ້າສູ່ໄລຍະຜັນຜວນ ເນື່ອງຈາກການຂວ້ຳບາດທາງເສດຖະກິດ ແລະ ພະລັງງານ ຕໍ່ປະເທດທີ່ຜະລິດພະລັງງານຊັ້ນນຳຂອງໂລກ ສິ່ງຜົນເຮັດນ້ຳມັນເຊື້ອໄຟໃນຕະຫຼາດໂລກ ມີລາຄາເໜັງຕີງຂຶ້ນສູງສຸດເປັນປະຫວັດການ ເນື່ອງຈາການສະໜອງໃນຕະຫຼາດບໍ່ພຽງພໍກັບຄວາມຕ້ອງການ.

ຈາກສະພາບຄືແນວນີ້ ແນ່ນອນວ່າ ມີຜົນກະທົບໂດຍກົງເຮັດໃຫ້ລາຄາຂາຍຍ່ອຍນ້ຳມັນເຊື້ອໄຟພາຍໃນປະເທດເຮົາ ຕ້ອງໄດ້ປັບຂຶ້ນຕາມລາຄາຕະຫຼາດໂລກ ເນື່ອງຈາກປະເທດລາວ ຕ້ອງໄດ້ນຳເຂົ້ານ້ຳມັນເຊື້ອໄຟ ທີ່ເປັນປັດໃຈພື້ນຖານມາຮັບໃຊ້ການຜະລິດ ແລະ ການດຳລົງຊີວິດ; ພ້ອມດຽວກັນ, ກໍສົ່ງຜົນໃຫ້ມີຄວາມຈຳເປັນນຳໃຊ້ເງິນຕາຕ່າງປະເທດຈຳນວນຫຼາຍຂຶ້ນໃນການຊື້ນ້ຳມັນ ແລະ ມີຜົນຕໍ່ຕົ້ນທຶນການຜະລິດ, ຂົນສົ່ງສິນຄ້າ ເຮັດໃຫ້ສິນຄ້າມີລາຄາສູງຂຶ້ນ ເຮັດໃຫ້ອັດຕາເງິນເຟີ້ເພີ່ມສູງຂຶ້ນເປັນເງົາຕາມມາ, ທັງເຮັດໃຫ້ການນຳເຂົ້ານ້ຳມັນປະສົບບັນຫາການຂາດທຶນ ຍ້ອນອັດຕາແລກປ່ຽນ ເປັນຜົນໃຫ້ການນຳເຂົ້ານ້ຳມັນຫຼຸດລົງ ເກີດສະພາບຂາດນ້ຳມັນ ດັ່ງທີ່ພວກເຮົາໄດ້ປະສົບໃນໄລຍະສອງເດືອນທີ່ຜ່ານມາ.

ດ້ວຍເຫດນີ້, ການປັບລາຄາໃນແຕ່ລະຄັ້ງຜ່ານມາ ແມ່ນມີຄວາມຈຳເປັນເພື່ອໃຫ້ເຮັດໃຫ້ລາຄາປັບປ່ຽນທັນຕາມສະພາບການ. ເຖິງແມ່ນວ່າ ຈະໄດ້ປັບລາຄາຂາຍຍ່ອຍນ້ຳມັນຂຶ້ນແລ້ວກໍຕາມ ແຕ່ດ້ວຍປັດໄຈອື່ນໆ ຄຽງຄູ່ກັບຄວາມແຕກໂຕນລະຫວ່າງອັດຕາແລກປ່ຽນທາງການກັບບໍ່ເປັນທາງການ ບວກກັບຄວາມຕ້ອງການໃຊ້ພະລັງງານສູງຂຶ້ນ ເພື່ອຮັບໃຊ້ການເປີດປະເທດ ພາຍຫລັງການລະບາດຂອງພະຍາດໂຄວິດ-19 ເຊິ່ງເປັນການເພີ່ມລາຍຈ່າຍຂອງຜູ້

ປະກອບການ ເຮັດໃຫ້ຫຼາຍບໍລິສັດນຳເຂົ້ານ້ຳມັນຕົກຢູ່ໃນສະພາບຂາດທຶນ ແລະ ບໍ່ສາມາດນຳເຂົ້ານ້ຳມັນເຊື້ອໄຟ ມາຮັບໃຊ້ສັງຄົມໄດ້ຢ່າງພຽງພໍ ແລະ ເປັນປົກກະຕິ.

ບັນດາບໍລິສັດຜູ້ນຳເຂົ້ານ້ຳມັນເຊື້ອໄຟ ຂອງລາວເຮົາ ບໍ່ສາມາດນຳເຂົ້າໄດ້ຕາມປະລິມານຄວາມຕ້ອງການ ເນື່ອງຈາກມື້ນຳເຂົ້າ ຫຼື ມີການຊຳລະເງິນຄ່ານ້ຳມັນເຊື້ອໄຟ ແຕ່ລາຄາໂຄງສ້າງພາຍໃນຍັງບໍ່ປັບຂຶ້ນທຽບກັບລາຄາໂລກ ເຮັດໃຫ້ບັນດາບໍລິສັດ ຕ້ອງຂາດທຶນສູງ. ຄວາມຕ້ອງການເງິນຕາຕ່າງປະເທດຂອງບໍລິສັດຜູ້ນຳເຂົ້ານ້ຳມັນເຊື້ອໄຟມີສູງ ເພື່ອໄປຊຳລະຄ່າການນຳເຂົ້ານ້ຳມັນເຊື້ອໄຟ ແຕ່ການສະໜອງເງິນຕາພົບຄວາມຫຍຸ້ງຍາກ ສິ່ງຜົນໃຫ້ການຈັດຊື້ນ້ຳມັນເຂົ້າມາຮັບໃຊ້ສັງຄົມບໍ່ພຽງພໍກັບຄວາມຕ້ອງການໃນແຕ່ລະໄລຍະ. ຄວາມຫຍຸ້ງຍາກທັງໝົດນັ້ນ ສະແດງອອກໃຫ້ເຫັນວ່າ ປະເທດເຮົາ ກ້າວເຂົ້າສູ່ວິກິດຂາດນ້ຳມັນ ເພື່ອສະໜອງໃຫ້ແກ່ການຊົມໃຊ້ພາຍໃນ ຊຶ່ງເຫັນໄດ້ວ່າ ບັນດາປໍ້ານ້ຳມັນເຊື້ອໄຟ ທີ່ບໍ່ໄດ້ຮັບການສະໜອງຈາກບໍລິສັດນຳເຂົ້າພຽງພໍ ແລະ ເປັນປົກກະຕິ ຈຶ່ງບໍ່ມີນ້ຳມັນເຊື້ອໄຟຂາຍ ຫຼື ຈຳໜ່າຍຫມົດໄວ ບໍ່ພຽງພໍກັບຄວາມຕ້ອງການ.

ລັດຖະບານ, ກໍຄືກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ສຸມຄວາມພະຍາຍາມ ຮັບມື ແລະ ຊອກວິທີແກ້ໄຂສະພາບດັ່ງກ່າວ ມາຕັ້ງແຕ່ທ້າຍປີທີ່ຜ່ານມາ ຈົນມາເຖິງໄລຍະທີ່ຫຍຸ້ງຍາກ ກໍໄດ້ອອກຂໍ້ຕົກລົງວ່າດ້ວຍ ການແຕ່ງຕັ້ງ ຄະນະສະເພາະກິດຮັບຜິດຊອບຊີ້ນຳ ແລະ ວາງມາດຕະການຮີບດ່ວນ ໃນການແກ້ໄຂບັນຫາການນ້ຳມັນເຊື້ອໄຟ, ລາຄາສິນຄ້າ ແລະ ເງິນຕາຕ່າງປະເທດ ສະບັບເລກທີ 36/ນຍ, ລົງວັນທີ 6 ມິຖຸນາ 2022 ເພື່ອຮີບຮ້ອນຄົ້ນຄວ້າ ແລະ ວາງມາດຕະການສະເພາະໜ້າ, ໄລຍະກາງ ແລະ ໄລຍະຍາວ ໂດຍໄດ້ເລັ່ງໃຫ້ແຕ່ລະພາກສ່ວນຮັບຜິດຊອບ ຊຶ່ງໄດ້ຈັດຕັ້ງປະຕິບັດບັນດາຫນ້າວຽກສຳຄັນ ດັ່ງນີ້:

## I. <u>ສະພາບການນຳເຂົ້າ ແລະ ການແຈກຢາຍນ້ຳມັນເຊື້ອໄຟ</u>

ພາຍຫຼັງການຕົກລົງເຫັນດີ ຈາກຄະນະ 36/ນຍ ກໍຄືລັດຖະບານ ເຂົ້າມາຊ່ວຍເຫຼືອແກ້ໄຂຄວາມຫຍຸ້ງຍາກ ໂດຍໃຫ້ນະໂຍບາຍແລກປ່ຽນເງິນຕາ ຕາມອັດຕາທາງການ ໃນອັດຕາ 14.065 ກີບຕໍ່ໂດລາສະຫະລັດ ໃຫ້ແກ່ບັນດາບໍລິສັດນຳເຂົ້ານ້ຳມັນ ທີ່ເປັນຜູ້ນຳເຂົ້າຈຳນວນຫຼາຍ ແລະ ມີຈຳນວນປໍ້ານ້ຳມັນ ທີ່ແຈກຢາຍທົ່ວປະເທດ ໃຫ້ມີຄວາມສາມາດນຳເຂົ້າໄດ້ເພີ່ມຂຶ້ນ ທຽບໃສ່ໄລຍະຍະດຽວກັນຂອງເດືອນຜ່ານມາ ເຊິ່ງຈາກການປະສານເກັບກຳຂໍ້ມູນການນຳເຂົ້າ ນັບແຕ່ວັນທີ 14 ມິຖຸນາ 2022 ເຫັນວ່າ ມີການນຳເຂົ້າສະເລ່ຍ 1,23 ລ້ານລິດມາໃນວັນທີ 15 ມິຖຸນາ 2022 ການນຳເຂົ້າສະເລ່ຍ 2,99 ລ້ານລິດ (ເພີ່ມຂຶ້ນ 1,76 ລ້ານລິດ), ວັນທີ 16 ມິຖຸນາ 2022 ການນຳເຂົ້າສະເລ່ຍ 3,57 ລ້ານລິດ (ເພີ່ມຂຶ້ນ 0,58 ລ້ານລິດ), ວັນທີ 17 ມິຖຸນາ 2022 ການນຳເຂົ້າສະເລ່ຍ 2,23 ລ້ານລິດ (ຫຼຸດລົງ 1,34 ລ້ານລິດ), ວັນທີ 18 ມິຖຸນາ 2022 ການນຳເຂົ້າສະເລ່ຍ 4 ລ້ານລິດ, ວັນທີ 19 ມິຖຸນາ

2022 ການນຳເຂົ້າສະເລ່ຍ 4 ແສນລິດ ແລະ ວັນທີ 20 ມິຖຸນາ 2022 ມື້ນີ້ ບັນດາບໍລິສັດນຳເຂົ້າ ມີແຜນການນຳເຂົ້າສະເລ່ຍ 5,92 ລ້ານລິດ ເຊິ່ງເປັນຕົວເລກການນຳເຂົ້າ ທີ່ສູງຂຶ້ນສົມຄວນ ທຽບໃສ່ຫຼາຍວັນຜ່ານມາ.

ພ້ອມນີ້ ກໍຂໍແຈ້ງໃຫ້ບັນດາທ່ານຊາບວ່າ, ກອງປະຊຸມຄັ້ງທີ 2 ຂອງຄະນະ 36/ນຍ ໃນວັນທີ 15 ມິຖຸນາ 2022 ກໍໄດ້ມີການກຳນົດແຜນວຽກລະອຽດ ແລະ ການອຳນວຍຄວາມສະດວກຂອງຂະແໜງການ ໃນການນຳເຂົ້າ ແລະ ແຈກຢາຍນ້ຳມັນເຊື້ອໄຟ ທີ່ເປັນລະບົບດີຂຶ້ນ ເຮັດໃຫ້ສາມາດກຳນົດແຜນນຳເຂົ້າ ແລະ ແຈກຢາຍນ້ຳມັນເຊື້ອໄຟ ເຊິ່ງຈະເຮັດໃຫ້ສາມາດຈຳໜ່າຍນ້ຳມັນເຊື້ອໄຟໄດ້ທົ່ວເຖິງຂຶ້ນກວ່າເກົ່າ ໃນຂອບເຂດທົ່ວປະເທດ ຕາມແຜນການທີ່ກຳນົດໄວ້, ສະແດງອອກໃນການສະໜອງນ້ຳມັນເຊື້ອໄຟຢູ່ທ້ອງຖິ່ນ ຈາກສະຫຼຸບລາຍງານຂອງບັນດາບໍລິສັດ ເຫັນວ່າ: ໃນມື້ນີ້ (ວັນທີ 20 ມິຖຸນາ 2022), ມີປ້ຳນ້ຳມັນເຊື້ອໄຟ ທີ່ຈະເປີດບໍລິການເປັນປົກກະຕິ ທັງໝົດ 706 ປ້ຳ ກວມ 35,47% ຂອງຈຳນວນປ້ຳນ້ຳມັນເຊື້ອໄຟທັງໝົດໃນຂອບເຂດທົ່ວປະເທດ. ສະຫຼຸບແລ້ວ, ຈາກນະໂຍບາຍ ຫຼືທິດຊີ້ນຳຂອງ ຄະນະ 36/ນຍ ເຮັດໃຫ້ເລີ່ມຕັ້ງແຕ່ວັນທີ 20 ມິຖຸນາ 2022 ມື້ນີ້ເປັນຕົ້ນໄປຈະມີປ້ຳນ້ຳມັນເຊື້ອໄຟ ເປີດໃຫ້ບໍລິການຢ່າງໜ້ອຍ 600 ປ້ຳ (ໃນນີ້, ລວມທັງ ບໍລິສັດນຳເຂົ້າທີ່ຍັງບໍ່ໄດ້ຮັບນະໂຍບາຍແລກປ່ຽນເງິນຕາ, ແຕ່ເຂົາເຈົ້າ ກໍໄດ້ສຸມກຳລັງແຮງເພື່ອຊ່ວຍການສະໜອງໃນໄລຍະວິກິດນີ້) ແລະ ຈະສາມາດຂະຫຍາຍອອກໄປໄດ້ຕື່ມອີກ ເຊັ່ນ ປ້ຳຂອງບໍລິສັດ ພີທີທີ ລາວ ຈຳກັດ ຈະສາມາດເປີດໄດ້ອີກ 43 ປ້ຳ ເຊິ່ງກະຊວງອຸດສາຫະກຳ ແລະການຄ້າ ໄດ້ຊີ້ນຳຢ່າງໃກ້ຊິດ ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ລົງຕິດຕາມການຈຳໜ່າຍ (ຈໍລະຈອນ) ແຕ່ຂອດສາງຂອງບໍລິສັດ ຮອດປ້ຳນ້ຳມັນເຊື້ອໄຟ (ເຮັດບັນທຶກຈົດຮັບຈົດຈ່າຍຊັດເຈນ).

ພ້ອມດຽວກັນນັ້ນ, ລັດຖະບານ ກໍໄດ້ກະກຽມ ອະນຸມັດເປີດແອລຊີ (LC) ຫຼືບັນຊີຄ້ຳປະກັນການຊຳລະ ໃນມູນຄ່າທີ່ສູງໃຫ້ແກ່ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ ເພື່ອໃຫ້ຮັບປະກັນການສະໜອງນ້ຳມັນ ໃຫ້ພຽງພໍກັບຄວາມຕ້ອງການຂອງສັງຄົມ.

## II. <u>ການປັບໂຄງສ້າງລາຄານ້ຳມັນເຊື້ອໄຟ:</u>

ນອກຈາກ ລັດຖະບານ ຈະມີນະໂຍບາຍຫຼຸດອາກອນຊົມໃຊ້ (ນ້ຳມັນແອັດຊັງທຳມະດາ ແລະ ນ້ຳມັນກາຊວນ) ລົງ 02 ຄັ້ງຜ່ານມາແລ້ວນັ້ນ ເພື່ອຫຼຸດຜ່ອນລາຄານ້ຳມັນເຊື້ອໄຟຊ່ວຍປະຊາຊົນບັນເທົາ, ຄະນະ 36/ນຍ ຍັງມີທິດຊີ້ນຳໃຫ້ ມີການຊ່ວຍໜູນ ໂດຍການກຳນົດອັດຕາແລກປ່ຽນແບບເດັດຖານ ຕາມວັນທີ 03 ມິຖຸນາ 2022 ຄື 14.065 ກີບຕໍ່ໂດລາສະຫະລັດ ເຮັດໃຫ້ລາຄານ້ຳມັນເຊື້ອໄຟປັບຂຶ້ນບໍ່ສູງຫຼາຍ ຕາມການເໜັງຕີງສູງຂຶ້ນຂອງລາຄານ້ຳມັນເຊື້ອໄຟໃນຕະຫຼາດໂລກ.

*ການປັບຂຶ້ນລາຄາ ຄັ້ງວັນທີ 17 ມິຖຸນາ 2022 ທີ່ໄດ້ປັບລາຄານ້ຳມັນເຊື້ອໄຟຂຶ້ນ ເຊິ່ງຖ້າອີງຕາມການເໜັງຕີງຕົວຈິງຂອງຕະຫຼາດໂລກ ທີ່ລາຄານ້ຳມັນກາຊວນສຳເລັດຮູບ ເໜັງຕີງຂຶ້ນ 0,0534 ໂດລາສະຫະລັດ/ລິດ ຫຼື ປະມານ 800 ກີບ/ລິດ, ພ້ອມທັງຄິດໄລ່ອັດຕາແລກປ່ຽນທາງການມື້ວັນທີ 14 ມິຖຸນາ 2022 ທີ່ 15.057 ກີບ/ໂດລາສະຫະລັດ ນັ້ນ ລາຄານ້ຳມັນຄວນປັບຂຶ້ນ 2.150 ກີບ ເມື່ອສົມທຽບກັບລາຄານຳເຂົ້າທີ່ປະຕິບັດວັນທີ 08 ມິຖຸນາ 2022 ຜ່ານມາ, ແຕ່ລັດຖະບານ ໄດ້ຫຼຸດບາງອາກອນ ລົງ ແລະ ໃຊ້ອັດຕາແລກປ່ຽນ ເດັດຖານຂອງວັນທີ 03 ມິຖຸນາ 2022 ທີ່ 14.065 ກີບ/ໂດລາສະຫະລັດ ຈຶ່ງເຮັດໃຫ້ລາຄາຂາຍຍ່ອຍນ້ຳມັນກາຊວນ ປັບຂຶ້ນແຕ່ 840 ກີບ/ລິດ. ສະນັ້ນ, ຖ້າລາຄານ້ຳມັນໃນຕະຫຼາດໂລກເໜັງຕີງຂຶ້ນສູງອີກ ລັດຖະບານ ກໍຈະຮີບຄົ້ນຄວ້າຊອກຫາວິທີທາງຕື່ມ.*

ສະພາບການເໜັງຕີງຂອງລາຄານ້ຳມັນເຊື້ອໄຟໃນປັດຈຸບັນເພີ່ມຂຶ້ນສູງ ສິ່ງຜົນກະທົບຕໍ່ການນຳເຂົ້ານ້ຳມັນເຊື້ອໄຟ ຂອງປະເທດເຮົາ ກໍຕ້ອງມີຄວາມຈຳເປັນນຳໃຊ້ເງິນຕາຕ່າງປະເທດເພີ່ມຂຶ້ນ ໃນຂະນະທີ່ແຫລ່ງສະໜອງເງິນຕາຕ່າງປະເທດຂອງປະເທດເຮົາມີຈຳກັດ ຈາກບັນຫາໂຄງສ້າງທາງເສດຖະກິດ. ຕໍ່ບັນຫາດັ່ງກ່າວ ຂັ້ນເທິງໄດ້ມີທິດຊີ້ນຳໃຫ້ບັນດາບໍລິສັດນຳເຂົ້ານ້ຳມັນເຊື້ອໄຟ ພາຍໃນປະເທດປຶກສາຫາລືຮ່ວມກັນ ເພື່ອເຈລະຈາຈັດຊື້ນ້ຳມັນເຊື້ອໄຟຈາກຫຼາຍແຫຼ່ງ ຫຼື ຈາກປະເທດຜູ້ຜະລິດ ທີ່ມີລາຄາຖືກກວ່າ ເພື່ອເປັນອີກທາງເລືອກ ໃນການສະໜອງນ້ຳມັນເຊື້ອໄຟ ໃນສະເພາະໜ້າ ແລະ ຍາວນານ ເຊິ່ງກະຊວງອຸດສາຫະກຳ ແລະ ການຄ້າ ກໍພວມຊຸ້ນຂ້ຽວຮ່ວມກັບບັນດາບໍລິສັດປະສານພົວພັນຕິດຕໍ່ຫຼາຍແຫຼ່ງ ແລະ ຄິດວ່າຈະມີຄວາມຄືບໜ້າໃນໄວໆນີ້.

ຄຽງຄູ່ກັນນີ້, ກະຊວງອຸດສາຫະກຳ ແລະ ການຄ້າ ຍັງໄດ້ຮ່ວມກັບຂະແໜງການກ່ຽວຂ້ອງ ຊຸກຍູ້ໃຫ້ບັນດາໂຮງງານປຸງແຕ່ງ, ປະສົມນ້ຳມັນເຊື້ອໄຟ ພາຍໃນປະເທດ ເຊັ່ນ ໂຮງງານກັ່ນນ້ຳມັນລາວເປັກ, ໂຮງງານປະສົມນ້ຳມັນເຊື້ອໄຟ ຍອດງື່ມພາວເວີ ແລະ ໂຮງງານນ້ຳມັນກາຊວນຊີວະພາບ ອາໂກຣເທັກ ໂດຍຄາດວ່າຈະມີກຳລັງການຜະລິດລວມເບື້ອງຕົ້ນ ເປັນນ້ຳມັນແອັດຊັງ 65 ລ້ານລິດຕໍ່ປີ, ນ້ຳມັນກາຊວນ 150 ລ້ານລິດຕໍ່ປີ ແລະ ນ້ຳມັນກາຊວນຊີວະພາບ 4 ລ້ານລິດຕໍ່ປີ.

ເຫັນວ່າໃນສະພາບປັດຈຸບັນນີ້ ທີ່ໃນທົ່ວໂລກກໍປະສົບບັນຫາເຊັ່ນດຽວກັນ ເປັນວິກິດການລາຄານ້ຳມັນເຊື້ອໄຟຂຶ້ນສູງທີ່ສຸດ ຄືດັ່ງກ່າວມານັ້ນ, ຊຶ່ງຫຼາຍປະເທດ ກໍຄືປະເທດລາວເຮົາ ກໍພວມປັບໂຕເພື່ອໃຫ້ປະຄັບປະຄອງສະຖານະການ ແລະ ພ້ອມກັນຜ່ານຜ່າວິກິດດັ່ງກ່າວ. ໄລຍະນີ້ ຈຶ່ງມີຄວາມຈຳເປັນທີ່ສຸດ ທີ່ພວກເຮົາທຸກຄົນ ກໍຄືພະນັກງານ, ທະຫານ, ຕຳຫຼວດ, ທຸລະກິດ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ຈົ່ງມີສະຕິ ຕໍ່ສະພາບຄວາມຫຍຸ້ງຍາກຄື

ໃນປະຈຸບັນ ຊ່ວຍກັນຮັບຮູ້ ແລະ ເຂົ້າໃຈສະຖານະການ ພ້ອມທັງຕິດຕາມສະພາບການຢ່າງໃກ້ຊິດ. ສຳຄັນທີ່ສຸດ ຕ້ອງປັບໂຕໃຫ້ສາມາດຜ່ານວິກິດ ໂດຍການຊ່ວຍກັນປະຢັດມັດທະຍັດໃຊ້ຈ່າຍໃນສິ່ງທີ່ຈຳເປັນ ໂດຍສະເພາະແມ່ນການຊົມໃຊ້ທີ່ບໍ່ຈຳເປັນ ຫລື ແບບຟຸມເຟືອຍ.

ປະຈຸບັນ, ຫຼາຍໆປະເທດ ແລະ ອົງການຈັດຕັ້ງສາກົນກຳລັງສົ່ງເສີມໃຫ້ມີການຫຼຸດຜ່ອນການຊົມໃຊ້ນ້ຳມັນເຊື້ອໄຟ ໂດຍໃຫ້ສິດທິພິເສດທາງດ້ານການຄ້າ, ຍົກເວັ້ນພາສີນຳເຂົ້າສິນຄ້າ, ການເຂົ້າເຖິງກອງທຶນ ແລະ ອື່ນໆ. ສະນັ້ນ, ພວກເຮົາທັງໝົດ ກໍຕ້ອງໄດ້ເລີ່ມຫັນເຂົ້າສູ່ທິດທາງ ແລະ ທ່າອ່ຽງ ຂອງສາກົນ ຄ່ອຍໆຫຼຸດຜ່ອນການເພິ່ງພາອາໄສນ້ຳມັນເຊື້ອໄຟລົງເທື່ອລະກ້າວ ແລະ ຫັນໄປສູ່ການຊົມໃຊ້ພະລັງງານສະອາດນັບມື້ຫຼາຍຂຶ້ນ, ເປັນຕົ້ນແມ່ນການຫັນໄປຊົມໃຊ້ພາຫະນະ, ລົດຂົນສົ່ງສາທາລະນະ ທີ່ໃຊ້ພະລັງໄຟຟ້າ, ການຂົນສົ່ງສິນຄ້າດ້ວຍທາງລົດໄຟ ເພື່ອປະຢັດຄ່າຂົນສົ່ງ ແລະ ໄດ້ປະລິມານຫລາຍຂຶ້ນ, ຫັນໄປສູ່ການຊົມໃຊ້ນ້ຳມັນເຊື້ອໄຟຊີວະພາບ, ການລົນນະລົງຂີ່ລົດຖີບ ແລະ ລົດຈັກໄຟຟ້າ ແລະ ອື່ນໆ. ເຂົ້າຮ່ວມໃນຂະບວນການພັດທະນາ ແລະ ການດຳລົງຊີວິດແບບຍືນຍົງ, ສົ່ງເສີມການຜະລິດສະອາດ ຕາມທິດສີຂຽວ ໂດຍນຳໃຊ້ພະລັງງານທາງເລືອກອື່ນທີ່ຍືນຍົງ.

ພ້ອມດຽວກັນນີ້, ກໍຮຽກຮ້ອງມາຍັງບັນດາຜູ້ປະກອບການທັງໝົດ ຈົ່ງຢ່າໄດ້ສວຍໂອກາດຂຶ້ນລາຄາສິນຄ້າຕາມລຳພັງໃຈ ຫຼືກັກຕຸນສິນຄ້າ ກໍຄືນ້ຳມັນເຊື້ອໄຟ ໂດຍເອົາປຽບຜູ້ຊື້ໃນໄລຍະທີ່ລາຄານ້ຳມັນເຊື້ອໄຟເໜັງຕີງຂຶ້ນ ແລະ ຫຼາຍຄົນກໍພົບກັບສະພາບຂໍ້ຫຍຸ້ງຍາກຫຼາຍຢ່າງ. ສະນັ້ນ, ທຸກທ່ານ ແລະ ທຸກພາກສ່ວນ ຈົ່ງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອພ້ອມກັນກ້າວຜ່ານວິກິດການໃນຄັ້ງນີ້. ພ້ອມກັນນັ້ນ, ກໍຊ່ວຍເປັນຫູເປັນຕາ ຫາກພົບເຫັນ ມີການສວຍໂອກາດຂຶ້ນລາຄາສິນຄ້າ ທ່ານສາມາດ ໂທແຈ້ງສາຍດ່ວນ 1510 ແລະ ເວັບໄຊປົກປ້ອງຜູ້ຊົມໃຊ້ www.lcp.gov.la ເຊິ່ງເຈົ້າໜ້າທີ່ກ່ຽວຂ້ອງ ຈະໄດ້ໃຊ້ມາດຕະການຕໍ່ຜູ້ລະເມີດຕາມກົດໝາຍ ແລະ ລະບຽບການ.

ຂໍຂອບໃຈ.